ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະຊາໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ່ 153/ນຍ

ນະຄອນຫລວງ, ວັນທີ 28.08.2008

# ດຳລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການຮັບຮອງ ແລະປະກາດໃຊ້ ແຜນຍຸດທະສາດ

## ການພັດທະນາຂະແໜງພະລັງງານ ແລະບໍ່ແຮ່ ແຕ່ປີ 2006-2020

- ອີງຕາມກົດໝາຍຂອງລັດຖະບານ ແຫ່ງ ສປປລາວ ສະບັບເລກທີ່ 02/ສພຊ,ລົງວັນທີ່ 6 ພຶດສະພາ 2003
- ອີງຕາມເອກະສານສະເໜີ ຂອງກະຊວງພະລັງງານ ແລະບໍ່ແຮ່ ສະບັບເລກທີ່ 0883/ພບ.ລົງວັນທີ່ 19 ສິງຫາ 2008

### ນາຍົກລັດຖະມົນຕີອອກດຳລັດ:

ມາດຕາ 1 : ຮັບຮອງ ແລະປະກາດໃຊ້ ແຜນຍຸດທະສາດການພັດທະນາ ຂະແໜງພະລັງງານ ແລະບໍ່ແຮ່ ແຕ່ປີ 2006_2020,ຕາມທີ່ລັດຖະມົນຕີວ່າການ ກະຊວງ ພະລັງງານ ແລະບໍ່ແຮ່ ໄດ້ ລົງລາຍເຊັນຄັ້ງວັນທີ່ 19 ສິງຫາ 2008

ມາດຕາ 2 : ມອບໃຫ້ກະຊວງ ພະລັງງານ ແລະບໍ່ແຮ່ ສົມທົບກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງຜັນຂະຫຍາຍ ແຜນຍຸດທະສາດ ດັ່ງກ່າວໃຫ້ປະກົດຜົນເປັນຈິງ.

ມາດຕາ 3 : ບັນດາກະຊວງ, ອົງການທຽບເທົ່າ, ແຂວງ,ນະຄອນຫລວງວຽງຈັນ ແລະພາກສ່ວນທີ່ກ່ຽວຂ້ອງອື່ນ ຈົ່ງຮັບຮູ້,ໃຫ້ການຮ່ວມມື ແລະພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 4 : ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ

ນາຍົກລັດຖະມົນຕີ ແຫ່ງ ສປປລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ★ ນາຍົກລັດຖະມົນຕີ

ບົວສອນ ບຸບຜາວັນ